ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ

ເລກທີ 943 /ກຍ

ນະຄອນຫຼວງວຽງຈັນ, ວັນທີ 21 ກໍລະກົດ 2022

# ຄຳແນະນຳ

## ກ່ຽວກັບ ການໄກ່ເກ່ຍຂໍ້ຂັດແຍ່ງຢູ່ ຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ

- ອີງຕາມ ດຳລັດຂອງລັດຖະບານ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ສະບັບເລກທີ 626/ລບ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຍຸຕິທຳ ສະບັບເລກທີ 601/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ.

## ລັດຖະມົນຕີ ອອກຄຳແນະນຳ:

### I. ຈຸດປະສົງ

1. ເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຂອງດຳລັດວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ສະບັບເລກທີ 626/ລບ, ລົງວັນທີ 22 ຕຸລາ 2021 ເຂົ້າສູ່ວຽກງານຕົວຈິງ;
2. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໄກ່ເກ່ຍຂໍ້ຂັດແຍ່ງ ຢູ່ຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ (ຂັ້ນເມືອງ) ມີປະສິດທິພາບ, ປະສິດທິຜົນ ແລະ ເປັນເອກະພາບໃນທົ່ວປະເທດ;
3. ເພື່ອເຮັດໃຫ້ວຽກງານໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ, ຕໍ່ເນື່ອງ ແລະ ມີຄວາມຍືນຍົງ.

### II. ເນື້ອໃນ

**1. ການແຕ່ງຕັ້ງຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນເມືອງ**

ໃຫ້ຫົວໜ້າຫ້ອງການຍຸຕິທຳຂັ້ນເມືອງ ແຕ່ງຕັ້ງພະນັກງານຢູ່ພາຍໃນຫ້ອງການຂອງຕົນ ຈຳນວນ 03 ທ່ານ ໂດຍມີຮອງຫົວໜ້າຫ້ອງການຍຸຕິທຳ 01 ທ່ານ ເປັນຫົວໜ້າ ແລະ ພະນັກງານອີກ 2 ທ່ານ ປະກອບເປັນຄະນະໄກ່ເກ່ຍຂໍ້ຂັດແຍ່ງ ໂດຍການເຫັນດີເປັນເອກະພາບຂອງພະແນກຍຸຕິທຳ ແຂວງ, ນະຄອນຫຼວງ ແລະ ໄດ້ຮັບການຮັບຮອງຈາກ ທ່ານເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

## 2. ປະເພດຂໍ້ຂັດແຍ່ງ ທີ່ສາມາດໄກ່ເກ່ຍຢູ່ຂັ້ນເມືອງ

ຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນເມືອງ ມີສິດໄກ່ເກ່ຍປະເພດຂໍ້ຂັດແຍ່ງ ດັ່ງນີ້:

1) ຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງແພ່ງ;

2) ຂໍ້ຂັດແຍ່ງກ່ຽວກັບສາຍພົວພັນການຄ້າ;

3) ຂໍ້ຂັດແຍ່ງກ່ຽວກັບສາຍພົວພັນຄອບຄົວ;

4) ຂໍ້ຂັດແຍ່ງກ່ຽວກັບສິ່ງແວດລ້ອມ;

5) ຂໍ້ຂັດແຍ່ງກ່ຽວກັບແຮງງານ;

6) ການກະທຳຜິດທາງອາຍາ;

7) ການກະທຳຜິດຂອງເດັກ.

ການໄກ່ເກ່ຍຂໍ້ຂັດແຍ່ງ ຕ້ອງບົນພື້ນຖານການຮ້ອງຂໍ ຫຼື ສະເໜີຂອງຄູ່ກໍລະນີ. ສໍາລັບຂໍ້ຂັດແຍ່ງເລັກນ້ອຍ, ບໍ່ມີມູນຄ່າສູງ, ບໍ່ມີຄວາມຫຍຸ້ງຍາກສັບສົນ ຄະນະໄກ່ເກ່ຍຂໍ້ຂັດແຍ່ງຢູ່ຂັ້ນເມືອງ ຕ້ອງແນະນຳໃຫ້ຄູ່ກໍລະນີໄປຍື່ນຕໍ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ເພື່ອໃຫ້ໄກ່ເກ່ຍເສຍກ່ອນ.

## 3. ຂັ້ນຕອນຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນເມືອງ

ການໄກ່ເກ່ຍຂໍ້ຂັດແຍ່ງຢູ່ຂັ້ນເມືອງ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

- ການຍື່ນຄຳຮ້ອງຂໍ;
- ການຮັບຄຳຮ້ອງຂໍ;
- ການຄົ້ນຄວ້າຄຳຮ້ອງຂໍ;
- ການກະກຽມໃຫ້ແກ່ການໄກ່ເກ່ຍ;
- ການດຳເນີນການໄກ່ເກ່ຍ;
- ການສະຫຼຸບ ແລະ ປິດກອງປະຊຸມໄກ່ເກ່ຍ.

ສ່ວນບາດກ້າວ ແລະ ເນື້ອໃນຂອງແຕ່ລະຂັ້ນຕອນ ແມ່ນໃຫ້ປະຕິບັດຄືກັນກັບ ການໄກ່ເກ່ຍຂໍ້ຂັດແຍ່ງຢູ່ຂັ້ນບ້ານ ທີ່ໄດ້ອະທິບາຍຢູ່ໃນປຶ້ມຄູ່ມືການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.

## 4. ການຈັດຕັ້ງປະຕິບັດຜົນຂອງການໄກ່ເກ່ຍ

- ຜົນຂອງການໄກ່ເກ່ຍ ແມ່ນການຕົກລົງ ຫຼື ບໍ່ຕົກລົງຂອງຄູ່ກໍລະນີ ຊຶ່ງຕ້ອງບັນທຶກໄວ້ໃນບົດບັນທຶກການໄກ່ເກ່ຍ, ການຕົກລົງຂອງຄູ່ກໍລະນີ ຕ້ອງບໍ່ຂັດກັບກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;
- ຖ້າຄູ່ກໍລະນີ ຫາກສາມາດຕົກລົງກັນໄດ້ ແມ່ນໃຫ້ຄະນະໄກ່ເກ່ຍຂັ້ນເມືອງ ຊຸກຍູ້ເຂົາເຈົ້າປະຕິບັດພັນທະຕໍ່ກັນ. ໃນກໍລະນີບໍ່ສາມາດຈັດຕັ້ງປະຕິບັດໄດ້ ຫຼື ປະຕິບັດໄດ້ສ່ວນໃດສ່ວນໜຶ່ງ ໃຫ້ຄະນະໄກ່ເກ່ຍມີຄຳເຫັນເປັນລາຍລັກອັກສອນ ເພື່ອໃຫ້ຄູ່ກໍລະນີນຳໄປສະເໜີພາກສ່ວນອື່ນແກ້ໄຂ;
- ຖ້າຄູ່ກໍລະນີຫາກບໍ່ສາມາດຕົກລົງກັນໄດ້ ແມ່ນໃຫ້ຄະນະໄກ່ເກ່ຍແນະນຳເຂົາເຈົ້ານຳໃຊ້ສິດຂອງຕົນ ເພື່ອແກ້ໄຂດ້ວຍວິທີອື່ນ.

5. **ການເກັບຄ່າໃຊ້ຈ່າຍ**

ການເກັບຄ່າໃຊ້ຈ່າຍໃນການໄກ່ເກ່ຍຂໍ້ຂັດແຍ່ງຢູ່ຂັ້ນເມືອງ ແມ່ນເພື່ອຮັບໃຊ້ເຂົ້າໃນການໄກ່ເກ່ຍ ເປັນຕົ້ນ ການສົ່ງບັດເຊີນ, ອັດສໍາເນົາເອກະສານ ແລະ ຄ່າໃຊ້ຈ່າຍອື່ນທີ່ຈໍາເປັນ;

ການເກັບຄ່າໃຊ້ຈ່າຍ ແມ່ນບໍ່ໃຫ້ເກີນ 200.000 ກີບ (ສອງແສນກີບ) ຕໍ່ໜຶ່ງຂໍ້ຂັດແຍ່ງ ໂດຍໃຫ້ເກັບຈາກຄູ່ກໍລະນີ ຝ່າຍລະເຄິ່ງ. ໃນກໍລະນີຂໍ້ຂັດແຍ່ງຫາກໄດ້ຜ່ານການໄກ່ເກ່ຍຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານມາແລ້ວ ແມ່ນບໍ່ໃຫ້ເກັບຄ່າໃຊ້ຈ່າຍອີກ.

ໃນກໍລະນີ ການໄກ່ເກ່ຍຫາກຕົກລົງກັນໄດ້ ຫຼື ບໍ່ສາມາດຕົກລົງກັນໄດ້ ແລະ ຄະນະໄກ່ເກ່ຍໄດ້ເຮັດບົດບັນທຶກພ້ອມທັງໄດ້ແນະນໍາໃຫ້ຄູ່ກໍລະນີນໍາໃຊ້ສິດຂອງຕົນ ເພື່ອແກ້ໄຂດ້ວຍວິທີການອື່ນແລ້ວ ຕໍ່ມາຄູ່ກໍລະນີໄດ້ມາຍື່ນຄໍາຮ້ອງຂໍຕໍ່ຄະນະໄກ່ເກ່ຍເພື່ອໃຫ້ໄກ່ເກ່ຍຂໍ້ຂັດແຍ່ງດັ່ງກ່າວຄືນໃໝ່ ໃນກໍລະນີນີ້ໃຫ້ຖືວ່າເປັນຂໍ້ຂັດແຍ່ງທີ່ຍື່ນເຂົ້າມາໃໝ່ ແລະ ໃຫ້ຈ່າຍຕື່ມອີກ 200.000 ກີບ (ສອງແສນກີບ).

ໃນກໍລະນີຄູ່ກໍລະນີ ທັງສອງຝ່າຍ ຫຼື ຝ່າຍໃດຝ່າຍໜຶ່ງ ບໍ່ສາມາດເສຍຄ່າໃຊ້ຈ່າຍຕາມທີ່ໄດ້ກໍານົດໄວ້ໃນຂ້າງເທິງນີ້ ຍ້ອນຄວາມທຸກຍາກຂາດເຂີນ ໂດຍມີການຢັ້ງຢືນຈາກອົງການປົກຄອງບ້ານ ກໍໃຫ້ຍົກເວັ້ນການເກັບຄ່າໃຊ້ຈ່າຍດັ່ງກ່າວ.

**III. ການຈັດຕັ້ງປະຕິບັດ**

1. ມອບໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທໍາ ຊີ້ນໍາ, ແນະນໍາທາງດ້ານວິຊາການ, ຈັດຝຶກອົບຮົມກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ສະຫຼຸບສັງລວມການເຄື່ອນໄຫວວຽກງານດັ່ງກ່າວຕາມພາລະບົດບາດຂອງຕົນຢ່າງເປັນປົກກະຕິ;

2. ມອບໃຫ້ພະແນກຍຸຕິທໍາ ແຂວງ, ນະຄອນຫຼວງ ຊຸກຍູ້, ຕິດຕາມ, ແນະນໍາທາງດ້ານວິຊາການ ແລະ ສະຫຼຸບການເຄື່ອນໄຫວວຽກໄກ່ເກ່ຍຂໍ້ຂັດແຍ່ງ ຂອງຫ້ອງການຍຸຕິທໍາເມືອງ, ເທດສະບານ, ນະຄອນ ຕາມພາລະບົດບາດຂອງຕົນຢ່າງເປັນປົກກະຕິ;

3. ມອບໃຫ້ຫ້ອງການຍຸຕິທໍາເມືອງ, ເທດສະບານ, ນະຄອນ ຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ຢ່າງເຂັ້ມງວດ, ຖ້າຫາກການຈັດຕັ້ງປະຕິບັດຕົວຈິງ ຫາກເຫັນວ່າຍັງມີບັນຫາຫຍຸ້ງຍາກ ໃຫ້ລາຍງານຂໍທິດຊີ້ນໍາຈາກຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ.

ຄໍາແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

**ລັດຖະມົນຕີ,**

ໄພວີ ສີບົວລີພາ